ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ເລກທີ 1494 /ສທ

ນະຄອນຫຼວງວຽງຈັນ, ວັນທີ . . . . 06 JUL 2016

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງໂຄສະນາອາຫານ, ຢາ ແລະ ຜະລິດຕະພັນການແພດ

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດສະບັບເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011.
- ອີງຕາມ ກົດໝາຍວ່າດ້ວຍອາຫານສະບັບເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ່ 178/ນຍ ລົງວັນທີ 5/4/2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ.
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງກົມອາຫານ ແລະ ຢາ.

## ລັດຖະມົນຕີກະຊວງສາທາລະນະສຸກອອກຂໍ້ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ວາງອອກເພື່ອກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງການໂຄສະນາອາຫານ, ຢາ ແລະ ຜະລິດຕະພັນການແພດແນໃສ່ປົກປ້ອງຜູ້ບໍລິໂພກໃຫ້ໄດ້ຮັບຂໍ້ມູນ ຂ່າວສານທີ່ຖືກຕ້ອງ ບໍ່ເກີນຄວາມເປັນຈິງ.

### ມາດຕາ 2 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ໃນການຄຸ້ມຄອງເນື້ອໃນການເຜີຍແຜ່ ຫຼື ໂຄສະນາທຸກຮູບແບບກ່ຽວກັບຜະລິດຕະພັນອາຫານ, ຢາ ແລະ ຜະລິດຕະພັນການແພດຂອງຜູ້ດຳເນີນທຸລະກິດທັງພາກລັດ ແລະ ເອ ກະຊົນຢູ່ ສປປ ລາວ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ອາຫານ** ໝາຍເຖິງວັດຖຸ ຫຼື ສານໃດໜຶ່ງ ຊຶ່ງຢູ່ໃນຮູບແບບສຳເລັດຮູບ, ເຄິ່ງສຳເລັດຮູບ ຫຼື ບໍ່ທັນໄດ້ປຸງແຕ່ງ ເຊັ່ນ: ອາຫານສົດ, ດິບເພື່ອການບໍລິໂພກຂອງຄົນ ລວມທັງເຄື່ອງດື່ມ, ຜະລິດຕະພັນອື່ນ ແລະ ສານໃດໜຶ່ງທີ່ນຳໃຊ້ໃນການຜະລິດ, ການກະກຽມປຸງແຕ່ງ ຫຼື ການບຳບັດອາຫານ ແຕ່ບໍ່ລວມເອົາເຄື່ອງສຳອາງ, ຢາສູບ ແລະ ສານທີ່ນຳໃຊ້ເປັນຢາປົວພະຍາດ.
2. **ຢາຫຼວງ** ໝາຍເຖິງຜະລິດຕະພັນຢາທີ່ໄດ້ຜ່ານການປຸງແຕ່ງສຳເລັດຮູບຕາມສູດຕຳລາ ແລະ ກຳມະວິທີວິທະຍາສາດທີ່ແນ່ນອນ ຊຶ່ງມີການຫຸ້ມຫໍ່ ແລະ ຕິດສະຫຼາກໃນນັ້ນສ່ວນປະກອບທີ່ອອກລິດໄດ້ຖືກດັດແປງໃຫ້ເໝາະສົມກັບການນຳໃຊ້ສຳລັບຄົນ.
3. **ຢາພື້ນເມືອງ** ໝາຍເຖິງຜະລິດຕະພັນຢາທີ່ໄດ້ມາຈາກພືດ, ຕົ້ນໄມ້, ສັດ, ແຮ່ທາດ ຫຼື/ແລະ ພາກສ່ວນໃດໜຶ່ງຂອງພືດ, ຕົ້ນໄມ້ ແລະ ສັດທີ່ເປັນຢາ ຊຶ່ງໄດ້ນຳມາປຸງແຕ່ງ, ຫຸ້ມຫໍ່ ແລະ ຕິດສະຫຼາກ.ໃນນັ້ນລັກສະນະ ແລະ ຄວາມແຮງຂອງການອອກລິດນັ້ນໄດ້ຮັບການພິສູດແລ້ວ ຫຼື ຍັງບໍ່ທັນໄດ້ຮັບການພິສູດດ້ວຍວິທະຍາສາດປະຈຸບັນ,ແຕ່ຕ້ອງຖືກຮັບຮູ້ຈາກກະຊວງສາທາລະນະສຸກ.
4. **ຢາໃໝ່** ໝາຍເຖິງຢາຫຼວງ ຫຼື ຢາພື້ນເມືອງໃດໜຶ່ງທີ່ໄດ້ຜະລິດ ຫຼື ນຳເຂົ້າໃໝ່ ຊຶ່ງບໍ່ທັນໄດ້ວາງຈຳໜ່າຍ ແລະ ນຳໃຊ້ມາກ່ອນຢູ່ ສປປ ລາວ.
5. **ຊັບພະຍາກອນທຳມະຊາດທີ່ເປັນຢາ** ໝາຍເຖິງວັດຖຸໃດໜຶ່ງທີ່ໄດ້ມາຈາກແຫຼ່ງທຳມະຊາດເຊັ່ນ: ພືດ, ຕົ້ນໄມ້, ແຮ່ທາດ ແລະ ສັດທີ່ສາມາດໃຊ້ເປັນວັດຖຸດິບ ເພື່ອຜະລິດເປັນຢາ ຫຼື ຜະລິດຕະພັນເສີມສຸຂະພາບ.
6. **ຜະລິດຕະພັນເສີມສຸຂະພາບ** ໝາຍເຖິງຜະລິດຕະພັນທີ່ໄດ້ມາຈາກພືດ, ຕົ້ນໄມ້, ແຮ່ທາດ, ສັດ ແລະ ວິຕາມິນຕ່າງໆ ທີ່ໄດ້ຜ່ານການປຸງແຕ່ງ, ການຫຸ້ມຫໍ່ ແລະ ຕິດສະຫຼາກ ຕົ້ນຕໍແມ່ນເພື່ອນຳໃຊ້ເຂົ້າໃນການເສີມສ້າງບາງຈຸລັງໃນຮ່າງກາຍ ແຕ່ຫາກບໍ່ແມ່ນນຳໃຊ້ເພື່ອກັນພະຍາດ ແລະ ປິ່ນປົວ.
7. **ອຸປະກອນການແພດ** ໝາຍເຖິງເຄື່ອງມືການແພດທີ່ເປັນເຄື່ອງໃຊ້, ເຄື່ອງຈັກ, ວັດຖຸໃນສະພາບແຫຼວ, ແຂງ , ເປັນອາຍ, ເປັນແສງທີ່ໃຊ້ໃນການບົ່ງມະຕິ ຫຼື ວັດຖຸທີ່ຄ້າຍຄື ທີມີຈຸດປະສົງນາໃຊ້ຕາມການບົ່ງໃຊ້ຂອງຜູ້ຜະລິດ, ອາດນຳໃຊ້ດ່ຽວ ຫຼື ນຳໃຊ້ຮ່ວມກັນກັບຊະນິດອື່ນ ຊຶ່ງອາດໃຊ້ເທື່ອດຽວ ຫຼື ຫຼາຍເທື່ອກໍ່ໄດ້.
8. **ຜະລິດຕະພັນເຄື່ອງສຳອາງ** ໝາຍເຖິງສານ ຫຼື ການປຸງແຕ່ງໃດໜຶ່ງທີ່ໃຊ້ທາ, ນວດ, ຂັດ, ສີດພົ່ນໃສ່ພາກສ່ວນໃດໜຶ່ງຂອງຮ່າງກາຍ(ຜິວໜັງ, ລະບົບຜົມ, ແຂ້ວ, ເລັບ, ສົບ, ປາກ) ເພື່ອທຳຄວາມສະອາດ, ເຮັດໃຫ້ກິ່ນຫອມ ແລະ ສວຍງາມ.

## ໝວດທີ II
## ການຄຸ້ມຄອງເນື້ອໃນການເຜີຍແຜ່ ແລະ ໂຄສະນາ

### ມາດຕາ 4 ການຄຸ້ມຄອງເນື້ອໃນການເຜີຍແຜ່ ແລະ ການໂຄສະນາ

ການເຜີຍແຜ່ ແລະ ໂຄສະນາອາຫານ, ອາຫານເສີມ, ຢາຫຼວງ, ຢາພື້ນເມືອງ, ຜະລິດຕະພັນເສີມສຸຂະພາບ, ເຄື່ອງສຳອາງ ແລະ ອຸປະກອນການແພດຈະດຳເນີນໄດ້ກໍ່ຕໍ່ເມື່ອໄດ້ຮັບອະນຸຍາດທາງດ້ານເນື້ອໃນ, ຮູບແບບ ແລະ ສະຖານທີ່ຈາກກະຊວງສາທາລະນະສຸກກ່ອນ ເພື່ອແນໃສ່ຮັບປະກັນໃຫ້ຜູ້ບໍລິໂພກນຳໃຊ້ຖືກຕ້ອງ, ສົມເຫດ ສົມຜົນ ແລະ ມີຄວາມປອດໄພ. ຫຼັງຈາກນັ້ນ ຈຶ່ງໄປຜ່ານຂະແໜງອື່ນທີ່ກ່ຽວຂ້ອງ.

**ມາດຕາ 5 ການຄຸ້ມຄອງເຜີຍແຜ່ ແລະ ໂຄສະນາຜະລິດຕະພັນຢາໃໝ່**

ການເຜີຍແຜ່ ແລະ ໂຄສະນາຜະລິດຕະພັນຢາໃໝ່ທີ່ຍັງບໍ່ໄດ້ຂຶ້ນທະບຽນ, ນໍາໃຊ້ ແລະ ຈໍາໜ່າຍຢູ່ ສປປ ລາວ ແຕ່ຕ້ອງການເຜີຍແຜ່ ແລະ ໂຄສະນາຕ້ອງມີໃບຢັ້ງຢືນຮັບຮອງຄຸນນະພາບ ຫຼື ໃບອະນຸຍາດຈໍາໜ່າຍຈາກອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງຂອງປະເທດຜູ້ຜະລິດ. ການເຜີຍແຜ່ ແລະ ໂຄສະນາຢາໃໝ່ສາມາດເຮັດໄດ້ໃນຮູບແບບວາງສະແດງເທົ່ານັ້ນ, ສະຫຼາກຕ້ອງລະບຸເປັນຢາຕົວຢ່າງຫ້າມຈໍາໜ່າຍ.

**ມາດຕາ 6 ເນື້ອໃນການໂຄສະນາອາຫານ ແລະ ອາຫານເສີມ**

ເນື້ອໃນການໂຄສະນາອາຫານ ແລະ ອາຫານເສີມໃຫ້ຖືກຕ້ອງຕາມຄວາມເປັນຈິງຂອງຄຸນນະພາບອາຫານ ແລະ ອາຫານເສີມທຸກປະເພດ, ຊະນິດ, ຄຸນລັກສະນະ, ເຄື່ອງໝາຍການຄ້າ, ການບໍລິການ, ມີຂໍ້ມູນຂ່າວສານທາງດ້ານອາຫານຖືກຕ້ອງ, ບໍ່ສຽດສີ, ບໍ່ໝິ່ນປະໝາດຜະລິດຕະພັນ ແລະ ການບໍລິການຂອງຜູ້ອື່ນ, ບໍ່ໃຫ້ກ່າວອ້າງເຖິງສັບພະຄຸນໃນການປິ່ນປົວພະຍາດ ແລະ ມີລັກສະນະຊວນເຊື່ອ ເກີນຄວາມເປັນຈິງ.

**ມາດຕາ 7 ເນື້ອໃນການໂຄສະນາຢາ**

ເນື້ອໃນການໂຄສະນາຢາຕ້ອງສອດຄ່ອງຕາມຄຸນນະພາບຂອງຢາ ທີ່ໄດ້ຂຶ້ນທະບຽນໄວ້, ຖືກຕ້ອງຕາມເນື້ອໃນ, ຮູບການ ແລະ ສະຖານທີ່ ທີ່ໄດ້ຮັບອະນຸຍາດ ຈາກກະຊວງສາທາລະນະສຸກ ແລະ ບໍ່ມີລັກສະນະຊວນເຊື່ອ ເກີນຄວາມເປັນຈິງ.

ຢາສາມັນປະຈໍາເຮືອນ ຫຼື ຢາທີ່ບໍ່ຈໍາເປັນຕ້ອງມີໃບສັ່ງຂອງແພດແມ່ນສາມາດໂຄສະນາຜ່ານສື່ຕ່າງໆໄດ້ທົ່ວໄປ.

ຢາຕ້ານເຊື້ອ ແລະ ຢາທີ່ໃຊ້ໃນການຄວບຄຸມຂອງທ່ານໝໍແມ່ນສາມາດໂຄສະນາໄດ້ໃນຂອບເຂດຈໍາກັດສະເພາະວົງການແພດເທົ່ານັ້ນ.

ສ່ວນເນື້ອໃນ ແລະ ຮູບການຕ້ອງໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກເສຍກ່ອນ.

**ມາດຕາ 8 ເນື້ອໃນການໂຄສະນາອຸປະກອນການແພດ**

ເນື້ອໃນການໂຄສະນາອຸປະກອນການແພດ ຕ້ອງສອດຄ່ອງກັບຄຸນນະພາບຂອງອຸປະກອນການແພດຕາມທີ່ໄດ້ຂຶ້ນທະບຽນ ຫຼື ຕາມການອະນຸຍາດຈາກກະຊວງສາທາລະນະສຸກ, ຖືກຕ້ອງຕາມເນື້ອໃນ, ຮູບການ ແລະ ສະຖານທີ່ ທີ່ໄດ້ຮັບອະນຸຍາດ ແລະ ວິທີການນໍາໃຊ້ຂອງອຸປະກອນການແພດ.

ສໍາລັບອຸປະກອນການແພດທີ່ຕ້ອງໄດ້ຂຶ້ນທະບຽນ ຫຼື ບໍ່ຈໍາເປັນຂຶ້ນທະບຽນຈະໄດ້ກໍານົດບັນຊີຕ່າງຫາກຕາມລໍາດັບຄວາມສ່ຽງຂອງອຸປະກອນ.

**ມາດຕາ 9 ເນື້ອໃນການໂຄສະນາເຄື່ອງສໍາອາງ**

ເນື້ອໃນການໂຄສະນາເຄື່ອງສໍາອາງຕ້ອງຖືກຕາມຄວາມເປັນຈິງ ແລະ ສອດຄ່ອງຕາມຄຸນນະພາບ, ປະເພດ, ຊະນິດ, ຄຸນລັກສະນະ, ເຄື່ອງໝາຍການຄ້າ, ການບໍລິການ, ບໍ່ສຽດສີ-ໝິ່ນປະໝາດຜະລິດຕະພັນອື່ນລວມທັງການບໍລິການຜູ້ອື່ນ ແລະ ຖືກຕ້ອງຕາມຂໍ້ມູນທີ່ໄດ້ຈົດແຈ້ງ. ການເຜີຍແຜ່ ແລະ ໂຄສະນາເຄື່ອງສໍາອາງແມ່ນບໍ່ໃຫ້ກ່າວອ້າງເຖິງສັບພະຄຸນໃນການປິ່ນປົວພະຍາດ ແລະ ມີລັກສະນະຊວນເຊື່ອເກີນຄວາມເປັນຈິງ.

**ມາດຕາ 10 ຮູບແບບການເຜີຍແຜ່ ຫຼື ໂຄສະນາ**

ຮູບແບບການເຜີຍແຜ່ ແລະ ໂຄສະນາມີດັ່ງນີ້:

1. ການຈັດປະຊຸມ: ສໍາມະນາ, ຝຶກອົບຮົມ, ກອງປະຊຸມວິທະຍາສາດ, ກອງປະຊຸມວິຊາການ; ອື່ນໆ.
2. ການເຜີຍແຜ່ ຜ່ານສື່ເອເລັກໂຕຼນິກ: ວິທະຍຸ, ໂທລະພາບ, ວີດີໂອ, ເທບ, ໂທລະໂຄ່ງ, ອິນເນດ ແລະ ອື່ນໆ.
3. ການເຜີຍແຜ່ຜ່ານສື່ສິ່ງພິມ: ປື້ມ, ໜັງສືພິມ, ວາລະສານ, ແຜ່ນພັບ, ໂປສະເຕີ້, ສະຕິກເກີ້, ປ້າຍໃບປິວ, ອື່ນໆ.
4. ວາງສະແດງ: ຕະຫລາດນັດ, ງານບຸນ, ສິລະປະວັນນະຄະດີ ແລະ ອື່ນໆ.

## ໝວດທີ III
## ຜູ້ມີສິດ ແລະ ຄວາມຮັບຜິດຊອບໃນການເຜີຍແຜ່ ແລະ ໂຄສະນາ

**ມາດຕາ 11 ຜູ້ມີສິດເຜີຍແຜ່ ແລະ ໂຄສະນາ**

ຜູ້ມີສິດຂໍອະນຸຍາດເຜີຍແຜ່ ແລະ ໂຄສະນາດ້ານອາຫານ, ຢາ ແລະ ຜະລິດຕະພັນການແພດຕ້ອງແມ່ນບໍລິສັດຂາອອກ-ຂາເຂົ້າ ຫຼື ສາຂາ, ໂຮງງານ ຫຼື ສາຂາ ແລະ ຕົວແທນຈໍາໜ່າຍທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ ແລະ ລະບຽບການຕ່າງໆ ຂອງກະ ຊວງສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 12 ຄວາມຮັບຜິດຊອບ**

ບຸກຄົນ, ນິຕິບຸກຄົນໃດໜຶ່ງທີ່ດໍາເນີນທຸລະກິດດ້ານອາຫານ, ຢາ ແລະ ຜະລິດຕະພັນການແພດ ທີ່ມີຈຸດປະສົງຈະເຜີຍແຜ່ ແລະ ໂຄສະນາຕ້ອງຮັບຜິດຊອບຕໍ່ຂໍ້ຄວາມ ແລະ ເນື້ອໃນ ຫຼີກເວັ້ນຄໍາເວົ້າທີ່ມີລັກສະນະຊວນເຊື່ອເກີນຄວາມເປັນຈິງ.

## ໝວດທີ IV
## ການຂໍອະນຸຍາດ ແລະ ອາຍຸຂອງການເຜີຍແຜ່ ແລະ ການໂຄສະນາ

**ມາດຕາ 13 ການຂໍອະນຸຍາດເຜີຍແຜ່ ແລະ ໂຄສະນາ**

ບຸກຄົນ, ນິຕິບຸກຄົນໃດໜຶ່ງ ທີ່ມີຈຸດປະສົງເຜີຍແຜ່ ຫຼື ໂຄສະນາຜະລິດຕະພັນອາຫານ, ຢາ ແລະ ຜະລິດຕະພັນການແພດ ຕ້ອງປະກອບເອກະສານ ຕາມແບບຟອມຂອງກົມອາຫານ ແລະ ຢາ.

**ມາດຕາ 14 ການປະກອບເອກະສານເພື່ອຂໍອະນຸຍາດ**

ການປະກອບເອກະສານເພື່ອຂໍອະນຸຍາດເຜີຍແຜ່ ແລະ ໂຄສະນາມີດັ່ງນີ້:

ກ. ສໍາລັບຈັດສໍາມະນາ, ຝຶກອົບຮົມ, ຈັດກອງປະຊຸມວິຊາການ, ການວາງສະແດງ ແລະ ອື່ນໆ.

1. ໃບຄໍາຮ້ອງຕາມແບບຟອມຂອງກົມອາຫານ ແລະ ຢາ 01 ສະບັບ
2. ໃບຢັ້ງຢືນການຂຶ້ນທະບຽນ ຫຼື ຈົດແຈ້ງ ຢູ່ ສປປ ລາວ 01 ສະບັບ
3. ຕົວຢ່າງເນື້ອໃນ ແລະ ຮູບການທີ່ຈະໂຄສະນາ
   (ເປັນພາສາລາວ, ຝະລັ່ງ ຫຼື ອັງກິດ )

4. ຕົວຢ່າງຕາມຫົວໜ່ວຍມັດທີ່ຂຶ້ນທະບຽນ 02 ຕົວຢ່າງ
(ອາຍຸການນຳໃຊ້ 6 ເດືອນຂຶ້ນໄປ)
5. ປະຫວັດຫຍໍ້ຂອງວິທະຍາກອນ(ປະຊຸມ, ສຳມະນາ) 01 ສະບັບ
6. ແຈ້ງສະຖານທີ່, ວັນເດືອນປີ ແລະ ຕາຕະລາງ(ປະຊຸມ, ສຳມະນາ) 01 ສະບັບ
7. ເປົ້າໝາຍ ແລະ ຈຳນວນຜູ້ທີ່ຈະເຂົ້າຮ່ວມ 01 ສະບັບ

ຂ. ສຳລັບຜ່ານສື່ເອເລັກໂຕຼນິກເຊັ່ນ: ວິທະຍຸ, ໂທລະພາບ, ວິດີໂອ, ໂທລະໂຄ່ງ, ເທັບ, ອິນເຕີເນດ ໃຫ້ປະກອບເອກະສານຕາມທີ່ກ່າວໄວ້ໃນ ມາດຕາ 13 ຂໍ້ ກ ແລ້ວຕ້ອງປະກອບ ຕົວຢ່າງ, ເນື້ອໃນ ແລະ ຮູບແບບ (ບົດຖ່າຍທຳ, ພາບ, ສຽງ) ທີ່ຈະເຜີຍແຜ່ ແລະ ໂຄສະນາ.

ຄ. ສຳລັບຜ່ານສິ່ງພິມຕ່າງໆເຊັ່ນ: ໜັງສືພິມ, ວາລະສານ, ສະຕິກເກີ, ໂປສະເຕີ, ປຶ້ມ, ປະຕິທິນ, ປ້າຍ, ໃບປິວ ແລະ ອຸປະກອນຕ່າງໆ, ໃຫ້ປະກອບເອກະສານຕາມທີ່ກ່າວໄວ້ໃນມາດຕາ13 ຂໍ້ ກ ແລ້ວ ຕ້ອງໄດ້ປະກອບຮ່າງສິ່ງພິມທີ່ຈະພິມ ແລະ ຮູບແບບຕົວຢ່າງທີ່ຈະໂຄສະນາຕາມຂະໜາດທີ່ເໝາະສົມ.

**ມາດຕາ 15 ອາຍຸການຂອງໃບອະນຸຍາດ ເຜີຍແຜ່ ແລະ ໂຄສະນາ**

1. ໃບອະນຸຍາດໂຄສະນາຜ່ານສື່ສິ່ງພິມຕ່າງໆເຊັ່ນ: ປ້າຍ, ສະຕິກເກີ, ໂປສະເຕີ້, ແຜ່ນພັບ, ປຶ້ມ,ໃບປິວ, ປະຕິທິນ ແລະ ອຸປະກອນອື່ນໆ ແມ່ນມີອາຍຸການນຳໃຊ້ 1 ປີ;
2. ໃບອະນຸຍາດໂຄສະນາຜ່ານສື່ເອເລັກໂຕຣນິກແມ່ນມີອາຍຸະການນຳໃຊ້ 3 ເດືອນ;
3. ສຳລັບການຈັດສ່ງມະນາ, ຝຶກອົບຮົມ, ກອງປະຊຸມວິທະຍາສາດ, ກອງປະຊຸມວິຊາການ, ວາງສະແດງ ມີອາຍຸການນຳໃຊ້ໄດ້ຄັ້ງດຽວ ແລະ ສະຖານທີ່ດຽວເທົ່ານັ້ນ.

## ໝວດທີ V

## ຂໍ້ຫ້າມ ແລະ ຂໍ້ຈຳກັດກ່ຽວກັບເນື້ອໃນການເຜີຍແຜ່ ແລະ ໂຄສະນາ

**ມາດຕາ 16 ຂໍ້ຫ້າມ**

1. ຫ້າມທຸກຮູບແບບການເຜີຍແຜ່ ແລະ ໂຄສະນາຜະລິດຕະພັນອາຫານ, ຢາ ແລະ ຜ½ລິດຕະພັນການແພດຢູ່ພາຍໃນ ແລະ ຕ່າງປະເທດ ທີ່ບໍ່ໄດ້ຮັບອະນຸຍາດດ້ານເນື້ອໃນຈາກ ກະຊວງສາທາລະນະສຸກ.
2. ຫ້າມການເຜີຍແຜ່ ແລະ ໂຄສະນາຢາຫຼວງ ແລະ ຢາພື້ນເມືອງລວມທັງຜະລິດຕະພັນເສີມສຸຂະ ພາບດ້ວຍຮູບແບບການຈົກສະຫຼາກ, ຊິງໂຊກ, ຊັກຊວນແບບຕ່ອງໂສ້ ແລະ ແຂ່ງຂັນໃຫ້ລາງວັນ ອື່ນໆ.
3. ຫ້າມເຜີຍແຜ່ ແລະ ໂຄສະນາຜະລິດຕະພັນອາຫານ ຫຼື ອາຫານເສີມລວມທັງຜະລິດຕະພັນເສີມສຸຂະພາບ ແລະ ເຄື່ອງສຳອາງທີ່ກ່າວອ້າງເຖິງສັບພະຄຸນໃນການປິ່ນປົວພະຍາດທັງພາກລັດ ແລະ ເອກະຊົນ.
4. ຫ້າມເຜີຍແຜ່ ແລະ ໂຄສະນາຢາ ແລະຜະລິດຕະພັນການແພດຢູ່ໃນສະຖານທີ່ບໍລິການສາທາລະນະສຸກທຸກຂັ້ນທີ່ບໍ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ.

**ມາດຕາ17  ຂໍ້ຈຳກັດກ່ຽວກັບເນື້ອໃນການ ແລະ  ໂຄສະນາອາຫານ, ອາຫານເສີມ**

ເນື້ອໃນການເຜີຍແຜ່ ແລະ ໂຄສະນາອາຫານ, ອາຫານເສີມຕ້ອງ:

1. ບໍ່ເປັນການໂອ້ອວດ,  ກ່າວອ້າງເຖິງສັບພະຄຸນວ່າ:  ສາມາດກັນພະຍາດ,  ບັນເທົາ,  ປິ່ນປົວ,  ຊວນເຊື່ອ  ແລະ ເກີນຄວາມເປັນຈິງ, ທີ່ໄດ້ແຈ້ງໃນເວລາຂຶ້ນທະບຽນ.
2. ບໍ່ມີຂໍ້ຄວາມທີ່ເຮັດໃຫ້ເຂົ້າໃຈວ່າເປັນຢາ ຫຼື ຢາກະຕຸ້ນທາງເພດ.
3. ບໍ່ມີການຮັບຮອງ ຫຼື ຍົກຍ້ອງສັບພະຄຸນໂດຍບຸກຄົນອື່ນ ຫຼື ຜູ້ບໍລິໂພກ.
4. ບໍ່ມີເນື້ອໃນການປຽບທຽບກັບຜະລິດຕະພັນອື່ນ.
5. ເນື້ອໃນການເຜີຍແຜ່ ແລະ ໂຄສະນາຕ້ອງບໍ່ຂັດກັບຮີດຄອງ ແລະ ວັດທະນາທຳອັນດີງາມ ຂອງຊາດ.
6. ເນື້ອໃນ  ແລະ  ຮູບພາບທີ່,  ເຜີຍແຜ່  ແລະ  ໂຄສະນາຕ້ອງຖືກຕ້ອງຕາມທີ່  ກະຊວງສາທາລະນະສຸກ ໄດ້ອະນຸຍາດ.

**ມາດຕາ 18 ຂໍ້ຈຳກັດກ່ຽວກັບເນື້ອໃນການເຜີຍແຜ່ ແລະ ໂຄສະນາຢາຫຼວງ, ຢາພື້ນເມືອງ**

ເນື້ອໃນການເຜີຍແຜ່ ແລະ ໂຄສະນາຢາຫຼວງ, ຢາພື້ນເມືອງຕ້ອງ:

1. ບໍ່ເປັນການໂອ້ອວດສັບພະຄຸນ ຫຼື ວັດຖຸທີ່ເປັນສ່ວນປະກອບຂອງຢາວ່າ: ສາມາດກັນພະຍາດ, ບັນເທົາ, ປິ່ນປົວ ໄດ້ຢ່າງສັກສິດ ຫຼື ເກີນຄວາມຈິງທີ່ເປັນການຊວນເຊື່ອເກີນສັບພະຄຸນທີ່ໄດ້ ແຈ້ງໃນເວລາຂຶ້ນທະບຽນ.
2. ບໍ່ເຮັດໃຫ້ເຂົ້າໃຈວ່າ  ມີຕົວຢາ  ຫຼື  ສ່ວນປະກອບຂອງຢາ,  ແຕ່ຄວາມຈິງແລ້ວແມ່ນບໍ່ມີ  ຫຼື ມີແຕ່ບໍ່ມີເທົ່າກັບທີ່ເຮັດໃຫ້ເຂົ້າໃຈ.
3. ບໍ່ມີຂໍ້ຄວາມທີ່ເຮັດໃຫ້ເຂົ້າໃຈວ່າເປັນຢາກະຕຸ້ນທາງເພດ ຫຼື ຢາທີ່ເຮັດໃຫ້ລຸລູກ.
4. ບໍ່ມີການຮັບຮອງ ຫຼື ຍົກຍ້ອງສັບພະຄຸນຢາໂດຍບຸກຄົນອື່ນ ຫຼື ຜູ້ບໍລິໂພກ.
5. ເນື້ອໃນການເຜີຍແຜ່ ແລະ ໂຄສະນາຕ້ອງບໍ່ຂັດກັບຮີດຄອງ ແລະ ວັດທະນາທຳອັນດີງາມ ຂອງຊາດ.
6. ເນື້ອໃນການເຜີຍແຜ່ ແລະ ໂຄສະນາຕ້ອງບໍ່ຊັກຊວນໃຫ້ຜູ້ບໍລິໂພກໃຊ້ຢາຊະຊາຍ ຫຼື ບໍ່ສົມ ເຫດ ສົມຜົນ.
7. ເນື້ອໃນ  ແລະ  ຮູບພາບທີ່ເຜີຍແຜ່  ແລະ  ໂຄສະນາຕ້ອງຖືກຕ້ອງຕາມທີ່  ກະຊວງສາທາລະນະສຸກ ໄດ້ອະນຸຍາດ.
8. ສຳລັບຢາຕ້ານເຊື້ອ  ແລະ  ຢາໃຊ້ໃນການຄວບຄຸມຂອງແພດ  ບໍ່ອະນຸຍາດໃຫ້ໂຄສະນາໃນຮູບແບບທົ່ວໄປ ຫຼື ໂຄສະນາທາງກ້ວາງ.

**ມາດຕາ          19 ຂໍ້ຈຳກັດກ່ຽວກັບເນື້ອໃນການເຜີຍແຜ່ ແລະ ໂຄສະນາອຸປະກອນການແພດ.**

1. ບໍ່ເປັນການໂອ້ອວດ, ກ່າວອ້າງເຖິງສັບພະຄຸນເກີນຄວາມຈິງ.
2. ບໍ່ມີຂໍ້ຄວາມທີ່ເຮັດໃຫ້ເຂົ້າໃຈວ່າເປັນຢາ ຫຼື ຢາກະຕຸ້ນທາງເພດ.
3. ບໍ່ມີການຮັບຮອງ ຫຼື ຍົກຍ້ອງສັບພະຄຸນໂດຍບຸກຄົນອື່ນ ຫຼື ຜູ້ບໍລິໂພກ.
4. ເນື້ອໃນຕ້ອງບໍ່ມີການປຽບທຽບກັບຜະລິດຕະພັນອື່ນ.
5. ເນື້ອໃນການເຜີຍແຜ່ ແລະ ໂຄສະນາຕ້ອງບໍ່ຂັດກັບຮີດຄອງ ແລະ ວັດທະນາທຳອັນດີງາມ ຂອງຊາດ

6. ເນື້ອໃນ ແລະ ຮູບພາບທີ່ເຜີຍແຜ່ ແລະ ໂຄສະນາຕ້ອງຖືກຕາມທີ່ກະຊວງສາທາລະນະສຸກ ໄດ້ອະນຸຍາດ.

**ມາດຕາ 20 ຂໍ້ຈຳກັດກ່ຽວກັບເນື້ອໃນການ ແລະ ໂຄສະນາເຄື່ອງສຳອາງ.**

1. ບໍ່ເປັນການໂອ້ອວດ, ກ່າວອ້າງເຖິງສັບພະຄຸນວ່າ: ສາມາດບຳບັດ, ບັນເທົາ, ປິ່ນປົວ ຫຼື ກັນພະຍາດ ຫຼື ການເຈັບປ່ວຍໄດ້, ຊວນເຊື່ອ ແລະ ເກີນຄວາມຈິງ ທີ່ໄດ້ແຈ້ງໃນເວລາຈົດແຈ້ງ ຢູ່ກະຊວງສາທາລະນະສຸກ.
2. ບໍ່ມີຂໍ້ຄວາມທີ່ເຮັດໃຫ້ເຂົ້າໃຈວ່າເປັນຢາ ຫຼື ຢາກະຕຸ້ນທາງເພດ.
3. ບໍ່ມີການຮັບຮອງ ຫຼື ຍົກຍ້ອງສັບພະຄຸນໂດຍບຸກຄົນອື່ນ ຫຼື ຜູ້ບໍລິໂພກ.
4. ເນື້ອໃນຕ້ອງບໍ່ມີການປຽບທຽບກັບຜະລິດຕະພັນອື່ນ.
5. ເນື້ອໃນການເຜີຍແຜ່ ແລະ ໂຄສະນາຕ້ອງບໍ່ຂັດກັບຮີດຄອງ ແລະ ວັດທະນາທຳອັນດີງາມ ຂອງຊາດ.
6. ເນື້ອໃນ ແລະ ຮູບພາບທີ່ເຜີຍແຜ່/ໂຄສະນາຕ້ອງຖືກຕາມທີ່ກະຊວງກະຊວງສາທາລະນະສຸກໄດ້ອະນຸຍາດ.

## ໝວດທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 21 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງຫາກເຜີຍແຜ່ ຫຼື ໂຄສະນາຜະລິດຕະພັນອາຫານ, ຢາ ຫຼື ຜະລິດຕະພັນການແພດຖືກຕ້ອງຕາມລະບຽບການຈະໄດ້ຮັບການຍ້ອງຍໍຢ່າງເໝາະສົມ ຈາກພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 22 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ,- ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງຫາກລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການດັ່ງນີ້:

- ຄັ້ງທີ 1 : ກ່າວເຕືອນ ແລະສຶກສາອົບຮົມ, ເຮັດບົດບັນທຶກ ພ້ອມທັງຂຽນໃບປະຕິຍານ.
- ຄັ້ງທີ 2 : ເຮັດບົດບັນທຶກ ແລະ ປັບໃໝ 1.500.000 ກີບ.
- ຄັ້ງທີ 3 : ເຮັດບົດບັນທຶກ ແລະ ປັບໃໝ 3.000.000 ກີບ ພ້ອມທັງຖອນທະບຽນ ຫຼື ຈົດແຈ້ງຂອງຜະລິດຕະພັນ. ກໍລະນີທີ່ ມີຜົນກະທົບຮ້າຍແຮງຕໍ່ສຸຂະພາບຕ້ອງຖືກປະຕິປັດຕາມລະບຽບ ກົດໝາຍແລ້ວແຕ່ກໍລະນີເບົາ ຫຼື ໜັກ.

ໂດຍສົມທົບກັບຂະແໜງການທີ່ກ່ຽວຂ້ອງ, ຂະແໜງການສາທາລະນະສຸກ ສາມາດສັ່ງຢຸດຊົ່ວຄາວ ຫຼື ຖາວອນ ການເຜີຍແຜ່ ແລະ ໂຄສະນາ ທີ່ເຫັນວ່າ ມີຜົນກະທົບຕໍ່ຜູ້ບໍລິໂພກ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 23 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອາຫານ ແລະ ຢາ ຜັນຂະຫຍາຍໃຫ້ເປັນລະອຽດ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໂດຍສົມທົບກັບພະແນກສາທາລະນາສຸກແຂວງ, ນະຄອນຫຼວງວຽງຈັນ ແລະ ບັນດາຂະແໜງການອື່ນໆ ທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ.

**ມາດຕາ 24 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນ ຂໍ້ກຳນົດວ່າດ້ວຍການຄຸ້ມຄອງການໂຄສະນາຢາ ແລະ ຜະລິດຕະພັນການແພດສະບັບ ເລກທີ2581/ກຊສ, ລົງວັນທີ 12 ພະຈິກ 2003. ຂໍ້ຕົກລົງ ແລະ ລະບຽບການສະບັບໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີກະຊວງສາທາລະນະສຸກ

ຮສ.ດຣ. ບຸນກອງ ສີຫາວົງ